ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ຜູ້ວ່າການ ທຫລ ຕ້ອນຮັບການຢ້ຽມຂໍ່ານັບຂອງທ່ານເອກອັກຄະລັດຖະທູດ ສ. ເຢຍລະມັນ ປະຈໍາ ສປປ ລາວ



ໃນວັນທີ 17 ມັງກອນ 2022 ທີ່ຫ້ອງຮັບແຂກ ທະນາຄານແຫ່ງ ສປປ ລາວ (ທຫລ) ທ່ານ ນາງ ອັນເນັດ ຄະໂນບ້ອກ (Annette KNOBLOCH) ເອກອັກຄະລັດຖະທູດ ສ. ເຢຍລະມັນ ປະຈໍາ ສປປ ລາວ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຂໍ່ານັບທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ ເພື່ອປຶກສາຫາລື ແລະ ແລກປ່ຽນທັດສະນະຮ່ວມກັບ ທ່ານຜູ້ວ່າການ ທຫລ ໃນວຽກງານການຮ່ວມມືໃນຂົງເຂດການເງິນ-ການທະນາຄານສອງຝ່າຍ.

ຈຸດປະສົງຂອງການເຂົ້າຢ້ຽມຂໍ່ານັບໃນຄັ້ງນີ້ແມ່ນ ເນື່ອງໃນໂອກາດທີ່ທ່ານເຂົ້າມາຮັບຕໍາແໜ່ງເປັນ ເອກອັກຄະລັດຖະທູດຜູ້ມີອໍານາດເຕັມ ແຫ່ງ ສ. ເຢຍລະມັນ ປະຈໍາ ສປປ ລາວ ຄົນໃໝ່ ແລະ ປຶກສາແລກປ່ຽນທັດສະນະຮ່ວມກັນໃນການຮ່ວມມືລະຫວ່າງ ທຫລ ແລະ ສ. ເຢຍລະມັນ ໂດຍສະເພາະຄວາມຄືບໜ້າການຈັດຕັ້ງປະຕິບັດຂອງສອງໂຄງການ ຄື: ❶ ໂຄງການການເງິນຈຸລະພາກຊົນນະບົດ-ການເຂົ້າເຖິງແຫຼ່ງທຶນຂອງຜູ້ທຸກຍາກ (Microfinance in Rural Areas-Access to Finance for the Poor: MRA-AFP); ແລະ ❷ ໂຄງການເງິນຊ່ວຍເຫຼືອລ້າ KfW ທີ່ລັດຖະບານ ສ. ເຢຍລະມັນ ໄດ້ໃຫ້ການຊ່ວຍເຫຼືອແກ່ ທຫລ.



ທ່ານຜູ້ວ່າການ ທຫລ ໄດ້ກ່າວຕ້ອນຮັບ ທ່ານ ນ. Annette KNOBLOCH, ເອກອັກຄະລັດຖະທູດຜູ້ມີອຳນາດເຕັມແຫ່ງ ສ. ເຢຍລະມັນ ປະຈຳ ສປປ ລາວ ພ້ອມດ້ວຍຄະນະ ແລະ ສະແດງຄວາມຍິນດີຕໍ່ການມາຮັບຕຳແໜ່ງໃໝ່ ປະຈຳ ສປປ ລາວ ເພື່ອມາສານຕໍ່ສາຍພົວພັນຮ່ວມມືລະຫວ່າງ ສປປ ລາວ ແລະ ສ. ເຢຍລະມັນ ທີ່ມີມາແຕ່ດົນນານ ຊຶ່ງລັດຖະບານ ສ. ເຢຍລະມັນ ໄດ້ໃຫ້ການຊ່ວຍເຫຼືອ ແລະ ສະໜັບສະໜູນ ສປປ ລາວ ໃນຫຼາຍໆຂົງເຂດການຮ່ວມມື ໂດຍສະເພາະໃນຂົງເຂດການເງິນ-ການທະນາຄານ ກໍ່ໄດ້ຮັບການຊ່ວຍເຫຼືອໃນຂົງເຂດດັ່ງກ່າວຫຼາຍ. ອີງໃສ່ສະພາບປັດຈຸບັນ, ເຖິງແມ່ນວ່າສະພາບເສດຖະກິດຂອງຫຼາຍໆປະເທດຍັງປະເຊີນກັບບັນຫາສິ່ງທ້າທາຍຕ່າງໆ ແຕ່ລັດຖະບານ ສ. ເຢຍລະມັນ ກໍ່ສືບຕໍ່ໃຫ້ການຊ່ວຍເຫຼືອແກ່ ສປປ ລາວ ໂດຍສະເພາະວຽກງານການເງິນຈຸລະພາກ. ນອກນີ້, ທ່ານຜູ້ວ່າການ ທຫລ ກໍ່ຫວັງຢ່າງຍິ່ງວ່າທ່ານເອກອັກຄະລັດຖະທູດ ຈະສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືສອງຝ່າຍໃຫ້ຫຼາຍຂຶ້ນ ແລະ ໃຫ້ການສະໜັບສະໜູນຊຶ່ງກັນ ແລະ ກັນ.

**#ຂ່າວ ແລະ ພາບໂດຍ: ນາງ ປາໄນ ພົນທະລາ**

## ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດ ຄ່າເງິນກີບລາວ